ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ຮ່ມ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທລະສັບ: (+856 21)418062 – 6

# ຄໍາສັ່ງ
## ສະບັບທີ 19/2025
## ເລື່ອງ ແຜນບໍລິຫານຄວາມສ່ຽງ ປະຈໍາປີ 2025

ຕາມລະບຽບປະຕິບັດເລື່ອງ ນະໂຍບາຍ ແລະ ການບໍລິຫານຄວາມສ່ຽງ (Risk Policy and Management) ປີ 2018 ທີ່ກໍານົດໃຫ້ບໍລິສັດຕ້ອງທົບທວນແຜນບໍລິຫານຄວາມສ່ຽງ (Risk Management Plan) ຢ່າງໜ້ອຍປີລະ 1 ຄັ້ງ ເພື່ອໃຊ້ເປັນແນວທາງປະຕິບັດສໍາລັບຄວບຄຸມລະດັບຄວາມສ່ຽງໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ນັ້ນ ບໍລິສັດໄດ້ຈັດເຮັດແຜນບໍລິຫານຄວາມສ່ຽງ ປະຈໍາປີ 2025 ສະບັບລົງວັນທີ 07 ສິງຫາ 2025 ຕາມເອກະສານແນບທ້າຍຄໍາສັ່ງສະບັບນີ້ ສໍາລັບເປັນແນວທາງໃຫ້ທຸກໜ່ວຍງານທີ່ກ່ຽວຂ້ອງໃຊ້ອ້າງອີງ ແລະ ປະຕິບັດຕາມ ດັ່ງນີ້:

1. ແຜນບໍລິຫານຄວາມສ່ຽງ (Risk Management Plan) ຕາມຄໍາສັ່ງສະບັບນີ້ ເອີ້ນວ່າ ແຜນບໍລິຫານຄວາມສ່ຽງ ປະຈໍາປີ 2025 ສະບັບລົງວັນທີ 07 ສິງຫາ 2025 ເຊິ່ງຜ່ານຄວາມເຫັນດີຈາກຄະນະກໍາມະການບໍລິຫານຄວາມສ່ຽງ ຕາມການປະຊຸມ ຄັ້ງທີ 3/2025 ເມື່ອວັນທີ 29 ກໍລະກົດ 2025 ແລະ ສະພາບໍລິຫານ ຕາມການປະຊຸມ ຄັ້ງທີ 5/2025 ເມື່ອວັນທີ 07 ສິງຫາ 2025.
2. ປະເດັນຄວາມສ່ຽງທີ່ສໍາຄັນ ຈາກການປະເມີນໃນຄັ້ງນີ້ ມີ 10 ປະເດັນທີ່ລຽງຕາມລໍາດັບຄວາມສ່ຽງສູງຫາຕໍ່າ ດັ່ງນີ້:
    - 2.1. ຄວາມສ່ຽງດ້ານຄວາມບໍ່ແນ່ນອນດ້ານນະໂຍບາຍຂອງລັດຖະບານ (Regulation uncertainty) - ມີຄວາມສ່ຽງ Critecial Risk ເຊິ່ງເພີ່ມຂຶ້ນຈາກຄັ້ງກ່ອນ ທີຈັດຢູ່ລະດັບ High Risk (ຄັ້ງກ່ອນ ຢູ່ລໍາດັບທີ 8)
    - 2.2. ຄວາມສ່ຽງດ້ານຄວາມບໍ່ແນ່ນອນຂອງເປົ້າໝາຍການຂະຫຍາຍຕົວຂອງບໍລິສັດ.(Mis-targets of the company's expansion) - ມີຄວາມສ່ຽງລະດັບ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລໍາດັບໃນຄັ້ງນີ້
    - 2.3. ຂາດບຸກຄະລາກອນທີ່ມີສັກກະຍະພາບ (Lack of Potential Staff) - ມີຄວາມສ່ຽງ High Risk ເຊິ່ງເທົ່າກັບຈາກຄັ້ງກ່ອນ (ຄັ້ງກ່ອນ ຢູ່ລໍາດັບທີ 7)
    - 2.4. ຄວາມສ່ຽງດ້ານສະພາວະວິກິດເສດຖະກິດຂອງປະເທດລາວ (Lao Economic crisis) – ມີຄວາມສ່ຽງ High Risk ເຊິ່ງເທົ່າກັນກັບຄັ້ງກ່ອນ (ຄັ້ງກ່ອນ ຢູ່ລໍາດັບທີ 9)
    - 2.5. ຄວາມສ່ຽງໃນການຝ່າຝືນບໍ່ໄປຕາມກົດລະບຽບ (Violate of Regulation) - ມີຄວາມສ່ຽງລະດັບ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລໍາດັບໃນປີນີ້

2.6. ຄວາມສ່ຽງດ້ານຜົນຂາດທຶນຈາກຄຸນນະພາບໜີ້ - ກຸ່ມຜະລິດພັນລູກຄ້າຄຳ (Credit Loss) – ມີຄວາມສ່ຽງ High Risk ເຊິ່ງເທົ່າກັບຈາກຄັ້ງກ່ອນ (ຄັ້ງກ່ອນ ຢູ່ລຳດັບທີ 4)

2.7. ຄວາມສ່ຽງທີ່ທຸລະກິດຈະຢຸດດຳເນີນການ (Operation Stop) - ມີຄວາມສ່ຽງລະດັບ High Risk ເຊິ່ງເທົ່າກັບຈາກຄັ້ງກ່ອນ (ຄັ້ງກ່ອນ ຢູ່ລຳດັບທີ 1)

2.8. ຄວາມສ່ຽງດ້ານສ່ວນແບ່ງການຕະຫຼາດ ແລະ ລາຍໄດ້ລົດຕ່ຳລົງ (Market Share and income decreasing) – ມີຄວາມສ່ຽງ Moderate Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນຄັ້ງນີ້

2.9. ຄວາມສ່ຽງດ້ານການດ້ອຍຄ່າຂອງຊັບສິນ (Devalue of Asset)) – ມີຄວາມສ່ຽງ Moderate Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນປີນີ້

2.10. ຄວາມສ່ຽງດ້ານຜົນຂາດທຶນຈາກຄຸນນະພາບໜີ້ - ກຸ່ມຜະລິດຕະພັນລູກຄ້າລົດຈັກ (Credit loss) - ມີຄວາມສ່ຽງ Moderate Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ທີ່ຈັດລຳດັບໃນຄັ້ງນີ້

3. ບໍລິສັດກຳນົດໃຫ້ມີການຕິດຕາມຄວາມສ່ຽງເປັນໄຕມາດ ເພື່ອໃຫ້ແນ່ໃຈມີການປະຕິບັດກົດແຜນບໍລິຫານຄວາມສ່ຽງ ແລະ ມີການຕິດຕາມປະເດັນຄວາມສ່ຽງຢ່າງຕໍ່ເນື່ອງ ເຊິ່ງຕ້ອງລາຍງານໃຫ້ຄະນະກຳມະການບໍລິຫານຄວາມສ່ຽງ ແລະ ສະພາບໍລິຫານຮັບຊາບດ້ວຍ.

ຄຳສັ່ງສະບັບນີ້ ໃຫ້ມີຜົນບັງຄັບຕັ້ງແຕ່ 07 ສິງຫາ 2025 ເປັນຕົ້ນໄປ

ສັ່ງເມື່ອ ວັນທີ 28 ສິງຫາ 2025

**ຜູ້ອຳນວຍການ**

(ທ່ານ ມະນີບ ຕຣີລົດວິໄລ)

## ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

## ບົດລາຍງານຄຸ້ມຄອງຄວາມສ່ຽງ ສະບັບ ປີ 2025

## ສະບັບລົງວັນທີ 07 ສິງຫາ 2025

| Risk Priority | Risk Priority (Prev. year) | Risk Source | Root Cause | Risk rating (Previous time) | Risk rating | Risk Trend |
|---|---|---|---|---|---|---|
| 1 | 8 | Regulation uncertainty | ສຄຄຊ ປະກາດໃຊ້ເກນ IFRS ໃນປີ 2026 ບໍລິສັດຕ້ອງໜີ້ຕາມເກນໃໝ່ | High Risk | Critecial Risk | ⬆ |
| | | | ສຄຄຊ ປະກາດໃຊ້ເກນ IFRS ໃນປີ 2026 ບໍລິສັດຕ້ອງ Staff Benefit ຂື້ນໃໝ່ ຈາກທີ່ເຄີຍຕັ້ງໃວ້ | | | New |
| 2 | | Mis-targets of the company's expansion | ຕາມປະມານການ ບໍລິສັດ ຕ້ອງເພີ່ມເງິນກູ້ຢືມຈຳນວນ 39,500 ລານກີບ ປັດຈຸບັນຫາໄດ້ແລ້ວ 11,000 ລ້ານກີບ ຕ້ອງຫາເພີ່ມອີກ 28,500 ລານກີບ ເຊິ່ງຫາກບໍ່ສາມາດກູ້ຢືມໄດ້ຕາມປະມານການຈະບໍ່ສາມາດຂະຫຍາຍສິນເຊື່ອໄດ້ຕາມເປົ້າ | | High Risk | New |
| 3 | 7 | Lack of Potential Staff | Infration ໃນ ສປປ ລາວ ສູງຕໍ່ເນື່ອງມາຊ່ວງ 2-3 ປີ ທີ່ຜ່ານມາມີການປັບເພີ່ມຄ່າແຮງຢ່າງໄວວາ ເກີດພາວະຄ່າຈ້າງເພີ່ມສູງຂື້ນ ຈາກຄ່າແຮງທີ່ສູງຂື້ນ | High Risk | High Risk | ⬌ |
| 4 | 9 | Lao Economic crisis Risk | ເກີດວິກດີເສດຖະກິດຂື້ນລະດັບໂລກ, ປະເທດລາວ ຫຼື ອຸສາຫະກຳ | High Risk | High Risk | ⬌ |
| 5 | | Violate of Regulation | LSX ປັບປຸງມາດຕະຖານບັນຊີຈາກ Lao Standard ເປັນ IFRS ໃນປີ 2026 ເຊິ່ງ MHTL ຕ້ອງປັບມາດຕະຖານໃຫ້ສຳເລັດ | | High Risk | New |
| 6 | 4 | Credit loss | NPL ລູກຄ້າກຸ່ມຜ່ອນຄຳ ເພີ່ມສູງເກີນເກນປົກະຕິ | High Risk | High Risk | ⬌ |
| 7 | 1 | Operation Stop | ການລະບາດຂອງໂລກຕິດຕໍ່ເຊັ່ນ: Covid-19, ໄຂ້ຫວັນໃຫ່ຍ ແລະ ອື່ນໆ | High Risk | High Risk | ⬌ |
| 8 | | Market Share and income decreasing | ມີການແຂ່ງຂັນດ້ານລາຄາ (price war) ເນື່ອງຈາກມີຜູ້ຫຼີ້ນລາຍໃຫ່ມໆ ເຂົ້າມາແຍ່ງເຊິງໃນສ່ວນແບ່ງຕະຫຼາດລົດຈັນ | | Moderate Risk | New |
| 9 | | Devalue of Asset | ໄຟໄໝ້ປື້ມທະບຽນ/ບັດທະບຽນ ທັ້ງໝົດ | | Moderate Risk | New |
| 10 | | Credit loss | NPL ລູກຄ້າກຸ່ມລົດຈັກ ເພີ່ມສູງເກີນເກນປົກະຕິ | | Moderate Risk | New |
| | 2 | Technology changing | ລົດຈັກປ່ຽນຈາກລະບົບນ້ຳມັນ ເປັນລະບົບໄຟຟ້າ | High Risk | | ⬇ |
| | 3 | Regulation uncertainty | ພາກລັດປະກາດໃຊ້ການຕັ້ງສຳຮອງໜີ້ຕາມເກນ BOL ທີ່ໜີ້ຄ້າງເກີນ 90 ວັນ ສຳຮອງ 100 % | High Risk | | ⬇ |
| | 5 | Currency Risk | ຄ່າເງິນກີບ ມີຄວາມຜັນຜວນສູງ MHT ກູ້ຢືມເງິນເປັນເງິນໂດລາ ແລະ ຄ້ຳປະກັນຈາກກຸນເງິນຕ່າງປະເທດ (ບາດ ແລະ ໂດລາສະຫະລັດ ) ຈິ່ງອາດຈະເຮັດໃຫ້ມູນຄ່າໜີ້ມີຄ່າສູງຂື້ນ ເມື່ອທຽບເປັນເງິນກີບ | High Risk | | ⬇ |
| | 6 | Loan Payment Capacity | ມີການກູ້ຢືມເງິນຈາກແຫ່ງດຽວ ແລະ ມີກຳນົດຊຳລະພ້ອມກັນ ຫາກມີການຮຽກຄືນເງິນກູ້ພ້ອມກັນ ຫຼື ບໍ່ຕໍ່ວົງເງິນຈະມີຜົນຕໍ່ສະພາບຄ່ອງໃນການດຳເນີນກິດຈະການ | High Risk | | ⬇ |
| | 10 | Devalue of Asset | ການເຊື່ອຄ່າຂອງລົດຈັກ ທີ່ເປັນຫຼັກປະກັນຕ່ຳກວ່າ 50% ຂອງລາຄາລົດໃໝ່ | High Risk | | ⬇ |

⬆ UP

⬇ DOWN

⬌ No change

Aug 28/25